ກະຊວງອຸດສາຫະກຳ ແລະ ການຄ້າ
Ministry of Industry and Commerce



# ການສ້າງຄວາມເຂັ້ມແຂງ ໃນການຄຸ້ມຄອງ ປ່າໄມ້ ເພື່ອອະນຸລັກ ຊັບສິນບັດ ທຳມະຊາດຂອງ ສປປ ລາວ

# ການຈັດຕັ້ງປະຕິບັດ ທີ່ມີປະສິດທິຜົນ ໃນການຫຼຸດຜ່ອນ ການຂຸດຄົ້ນໄມ້ທີ່ຜິດກົດໝາຍ

ການຂຸດຄົ້ນໄມ້ທີ່ຜິດກົດໝາຍ ກໍ່ໃຫ້ເກີດບັນຫາທາງ ສິ່ງແວດລ້ອມ ແລະ ສັງຄົມຢ່າງຮ້າຍແຮງ, ເຊັ່ນ ການເສື່ອມໂຊມຂອງປ່າໄມ້, ການສູນເສຍ ຊີວະນາໆພັນ ແລະ ການເພີ່ມຂຶ້ນຂອງ ທາດອາຍຜິດເຮືອນແກ້ວ, ລວມທັງການສູນເສຍລາຍຮັບ ຂອງບັນດາລັດຖະບານ ໃນທົ່ວໂລກ ເຊິ່ງ ໄດ້ຄາດຄະເນຕົກເປັນເງິນຢູ່ໃນລະຫວ່າງ 10 ຕື້ ແລະ 15 ຕື້ ໂດລາສະຫະລັດ ໃນແຕ່ລະປີ. ບັນຫາດັ່ງກ່າວໄດ້ຖືກຍົກຂຶ້ນ ໃນກອງປະຊຸມ ຂອງກຸ່ມ 8ປະເທດອຸດສາຫະກຳ ທີ່ທັນສະໄໝ (G8) ໃນປີ 1998, ເຊິ່ງໄດ້ມີການປຶກສາຫາ ເຖິງມາດຕະການ ໃນການສະກັດກັ້ນ ການຂຸດຄົ້ນໄມ້ທີ່ຜິດກົດໝາຍ ແລະ ໄດ້ເຊັນຮັບຮອງ ແຜນງານຄຸ້ມຄອງປ່າໄມ້ ຢ່າງເປັນທາງການ.

ຫຼັງຈາກນັ້ນ, ໃນເດືອນ ເມສາ 2002, ສະຫະພາບເອີຣົບ ໄດ້ເປັນເຈົ້າພາບໃນການຈັດກອງປະຊຸມ ລະດັບສາກົນຂຶ້ນ ເພື່ອປຶກສາຫາລື ວ່າ ສະຫະພາບເອີຣົບຈະສາມາດປະກອບສ່ວນ ເຂົ້າໃນການສ້າງມາດຕະການແນວໃດ ເພື່ອຕ້ານການຂຸດຄົ້ນໄມ້ທີ່ຜິດກົດໝາຍ. ໃນກອງປະຊຸມສຸດຍອດ ກ່ຽວກັບ ການພັດທະນາທີ່ຍືນຍົງ ທີ່ຈັດຂຶ້ນໃນ ເມືອງ ໂຈຮັນເນສເບີ ໃນປີດຽວກັນ, ສະຫະພາບເອີຣົບໄດ້ໃຫ້ຄວາມມຸ່ງໝັ້ນ ເພື່ອຕ້ານການຂຸດຄົ້ນໄມ້ ແລະ ການຄ້າໄມ້ ທີ່ຜິດກົດໝາຍ. ໃນປີ 2003, ສະຫະພາບເອີຣົບ ໄດ້ຮັບຮອງ ບົດສະເໜີ ແຜນງານການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ ສະບັບທຳອິດ (FLEGT) ຂຶ້ນ ເພື່ອຊ່ວຍ ບັນດາສະມາຊິກຂອງຕົນ ໃນການຕ້ານ ແລະ ສະກັດກັ້ນ ການຂຸດຄົ້ນໄມ້ທີ່ຜິດກົດໝາຍ ໂດຍມີການຮ່ວມມືກັບ ບັນດາປະເທດທີ່ຜະລິດໄມ້.








## FLEGT ແມ່ນຫຍັງ?

FLEGT ແມ່ນ ການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້. ແຜນງານ EU FLEGT ສົ່ງເສີມການຄຸ້ມຄອງ ປ່າໄມ້ ໃນຂະແໜງປ່າໄມ້ ຢູ່ທົ່ວໂລກ ໂດຍມີຈຸດປະສົງ ໃນການຫຼຸດຜ່ອນ ການຂຸດຄົ້ນໄມ້ທີ່ຜິດກົດໝາຍ ແລະ ສ້າງຄວາມເຂັ້ມແຂງ ການຄຸ້ມຄອງ ປ່າໄມ້ທີ່ຍືນຍົງ. FLEGT ໄດ້ສ້າງຂຶ້ນ ເພື່ອປ້ອງກັນ ການນໍາເຂົ້າໄມ້ ແລະ ຜະລິດຕະພັນ ທີ່ເຮັດດ້ວຍໄມ້ ທີ່ຜິດກົດໝາຍ ເຂົ້າໃນຕະຫຼາດສະຫະພາບເອີຣົບ.

ແຜນງານ EU FLEGT ສຸມໃສ່ 7ຂົງເຂດວຽກງານຫຼັກ ແລະ ລວມທັງ ການຊ່ວຍເຫຼືອທາງດ້ານການເງິນ ແລະ ເຕັກນິກ ພ້ອມທັງ ການໃຫ້ຄໍາແນະນໍາໃຫ້ບັນດາປະເທດທີ່ຜະລິດໄມ້. ເນື້ອໃນທີ່ສໍາຄັນ ຂອງແຜນງານນີ້ ແມ່ນ ຂໍ້ຕົກລົງ ການເຂົ້າເປັນຄູ່ຮ່ວມການຄ້າໄມ້ແບບສະໝັກໃຈ (VPA) ແມ່ນ ໄດ້ສ້າງຕັ້ງຂຶ້ນ ລະຫວ່າງ ສະຫະພາບເອີຣົບ ແລະ ບັນດາປະເທດທີ່ຜະລິດໄມ້.




## VPA ແມ່ນຫຍັງ?

ຂໍ້ຕົກລົງ ການເຂົ້າເປັນຄູ່ຮ່ວມການຄ້າໄມ້ ແບບສະຫມັກໃຈ (VPA) ແມ່ນ ຂໍ້ຕົກລົງ ການຄ້າໄມ້ຂອງສອງຝ່າຍ ລະຫວ່າງ ສະຫະພາບເອີຣົບ ແລະ ບັນດາປະເທດທີ່ຜະລິດໄມ້ ທີ່ຢູ່ນອກອານາເຂດຂອງ ສະຫະພາບເອີຣົບ. VPA ມີເປົ້າໝາຍ ໃນການຮັບປະກັນວ່າ ໄມ້ອັນໃດກໍ່ຕາມທີ່ນຳເຂົ້າຈາກປະເທດທີ່ຜະລິດໄມ້ ເຂົ້າໃນຕະຫຼາດຂອງສະຫະພາບເອີຣົບ ແມ່ນຕ້ອງມາຈາກແຫຼ່ງທີ່ຖືກຕ້ອງຕາມກົດໝາຍ ແລະ ຊ່ວຍປະເທດຄູ່ຮ່ວມການຄ້າໄມ້ ເພື່ອຢຸດຕິການຂຸດຄົ້ນໄມ້ທີ່ຜິດກົດໝາຍ ໂດຍຜ່ານການປັບປຸງການຄຸ້ມຄອງປ່າໄມ້ ແລະ ລະບຽບການ.

ການເຂົ້າຮ່ວມໃນການເຈລະຈາ VPAs ສຳລັບ ບັນດາປະເທດທີ່ສົ່ງອອກໄມ້ ແມ່ນແບບສະຫມັກໃຈ, ແຕ່ໃນເມື່ອ VPA ໄດ້ມີຜົນບັງຄັບໃຊ້ແລ້ວ, VPA ໄດ້ກາຍເປັນຂໍ້ຜູກມັດ ທາງດ້ານກົດໝາຍຂອງທັງສອງຝ່າຍ. ເນື້ອໃນທີ່ສຳຄັນຂອງ VPA ແມ່ນ ລະບົບຄ້ຳປະກັນໄມ້ທີ່ຖືກຕ້ອງຕາມກົດໝາຍ (TLAS), ທີ່ສ້າງຂຶ້ນ ເພື່ອກວດກາຢັ້ງຢືນໄມ້ທີ່ຖືກຕ້ອງຕາມກົດໝາຍ ຈາກຕົ້ນກຳເນີດ ໂດຍຜ່ານຕ່ອງໂສ້ການສະໜອງໄມ້ທັງໝົດ ຈົນຮອດຈຸດສຸດທ້າຍ ໃນການຂາຍ ຫຼື ສົ່ງອອກ. VPA ມີຄວາມມຸ້ງໝັ້ນ ໃນການສ້າງລະບົບທາງດ້ານນິຕິກຳ, ການຄຸ້ມຄອງ ແລະ ເຕັກນິກ ທີ່ມີຄວາມເຊື່ອຖືເພື່ອກວດກາຢັ້ງຢືນວ່າ ໄມ້ທີ່ໄດ້ຜະລິດ ແມ່ນໄດ້ຈັດຕັ້ງປະຕິບັດຕາມກົດໝາຍຂອງປະເທດ.

# TLAS ແມ່ນຫັຍງ?

ລະບົບຄໍ້າປະກັນໄມ້ທີ່ຖືກຕ້ອງຕາມກົດໝາຍ (TLAS) ແມ່ນອົງປະກອບ ຫຼັກ ຂອງ VPAs ລະຫວ່າງ ສະຫະພາບເອີຣົບ ແລະ ບັນດາປະເທດທີ່ຜະລິດໄມ້. ຈຸດປະສົງຂອງ ລະບົບຄໍ້າປະກັນໄມ້ທີ່ຖືກຕ້ອງຕາມກົດໝາຍ ແມ່ນ ເພື່ອຮັບປະກັນວ່າ ໄມ້ ຫຼື ຜະລິດຕະພັນໄມ້ ທີ່ໄດ້ສົ່ງອອກຈາກບັນດາປະເທດຄູ່ຮ່ວມການຄ້າໄມ້ ເຂົ້າສູ່ຕະຫຼາດຂອງ EU ແມ່ນໄດ້ຜະລິດ ແລະ ຈັດຕັ້ງປະຕິບັດຕາມນິຕິກຳຂອງປະເທດ. TLAS ມີ 5 ອົງປະກອບຫຼັກຄື:

1. **ນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍ (TLD):** ກຳນົດ ກົດໝາຍ ແລະ ລະບຽບການ ທີ່ຕ້ອງການບັນລຸ ແລະ ຈັດຕັ້ງປະຕິບັດ ໂດຍອີງໃສ່ຄວາມຍືນຍົງທາງດ້ານ 3ກ້ອນເສົາ ຂອງການພັດທະນາແບບຍືນຍົງ (ດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ);
2. **ການຄວບຄຸມຕ່ອງໂສ້ການສະໜອງໄມ້:** ກຳນົດກົນໄກ ເພື່ອບັນທຶກ, ກວດກາ ແລະ ສົມທຽບ ຄວາມຖືກຕ້ອງຂອງຂໍ້ມູນໄມ້ ຫຼື ຜະລິດຕະພັນໄມ້ ໂດຍຜ່ານຕ່ອງໂສ້ການຜະລິດທັງໝົດ ເພື່ອສາມາດ ຕິດຕາມ ຍ້ອນຫຼັງເຖິງແຫຼ່ງທີ່ມາຂອງໄມ້ ຫຼື ຜະລິດຕະພັນໄມ້;
3. **ການກວດກາຢັ້ງຢືນຄວາມຖືກຕ້ອງຂອງຂໍ້ມູນໄມ້:** ກຳນົດວິທີການກວດກາຢັ້ງຢືນຄວາມຖືກຕ້ອງ ຂອງການຈັດຕັ້ງປະຕິບັດ TLD ແລະ ການຄວບຄຸມຕ່ອງໂສ້ການສະໜອງໄມ້ ເພື່ອອອກໃບອະນຸຍາດ FLEGT ໃຫ້ບັນດາຜູ້ສົ່ງອອກ;
4. **ໃບອະນຸຍາດ FLEGT:** ປະເທດຄູ່ຮ່ວມການຄ້າໄມ້ ຈະໄດ້ອອກໃບອະນຸຍາດ ໃຫ້ແກ່ຜູ້ສົ່ງອອກ, ເຊິ່ງອີງຕາມການກວດກາຢັ້ງຢືນຄວາມຖືກຕ້ອງທີ່ດຳເນີນໂດຍເຈົ້າໜ້າທີ່ກວດກາ;
5. **ການຕິດຕາມກວດກາແບບອິດສະຫຼະ:** ແມ່ນອົງການຕິດຕາມກວດກາບຸກຄົນທີສາມ ເຊິ່ງເປັນອົງການອິດສະຫຼະ ທີ່ໄດ້ຮັບການແຕ່ງຕັ້ງຂຶ້ນ ເພື່ອກວດກາປະສິດທິຜົນ ໃນການຈັດຕັ້ງປະຕິບັດອົງປະກອບທັງໝົດຂອງ TLAS.



# ເປັນຫຍັງ ສປປ ລາວ ຈຶ່ງລິເລີ່ມ ການເຈລະຈາ FLEGT VPA?

ໜຶ່ງໃນຍຸດທະສາດທີ່ສຳຄັນ ຂອງລັດຖະບານ ສປປ ລາວ ແມ່ນສຸມໃສ່ແຜນງານ FLEGT ເພື່ອສົ່ງເສີມ ການຄຸ້ມຄອງປ່າໄມ້ ທີ່ດີ ໃນຂະແໜງການປ່າໄມ້ ເຊິ່ງຈະຊ່ວຍໃນການຫຼຸດຜ່ອນຄວາມທຸກຍາກ ແລະ ຄຸ້ມຄອງຊັບພະຍາກອນປ່າໄມ້ແບບຍືນຍົງ.

ນັບແຕ່ປີ 2017, ສປປ ລາວ ໄດ້ເຈລະຈາ FLEGT VPA (ຫຼື ຂໍ້ຕົກລົງການເຂົ້າເປັນຄູ່ຮ່ວມການຄ້າໄມ້ແບບສະໝັກໃຈ) ກັບ ສະຫະພາບເອີຣົບ. VPA ໃຫ້ຄວາມມຸ່ງໝັ້ນ ແລະ ການດຳເນີນງານຂອງທັງສອງຝ່າຍ ເພື່ອພະຍາຍາມແກ້ໄຂ ການຂຸດຄົ້ນໄມ້ທີ່ຜິດກົດໝາຍ. ເມື່ອໄດ້ຮັບການເຊັນ ແລະ ຈັດຕັ້ງປະຕິບັດແລ້ວ, VPA ຈະຮັບປະກັນວ່າ ໄມ້ທີ່ສົ່ງອອກ ແລະ ໄມ້ ທີ່ນຳໃຊ້ພາຍໃນປະເທດ ແມ່ນຖືກຕ້ອງຕາມກົດໝາຍ.

ສຳລັບ ສປປ ລາວ ແລ້ວ FLEGT VPA ບໍ່ພຽງແຕ່ກ່ຽວຂ້ອງກັບ ໄມ້ທີ່ຖືກຕ້ອງຕາມກົດໝາຍເທົ່ານັ້ນ ແຕ່ຍັງເປັນໂອກາດ ໃນການປັບປຸງຂະແໜງການປ່າໄມ້ ແລະ ສ້າງຄວາມເຂັ້ມແຂງ ໃຫ້ພາກອຸດສາຫະກຳປຸງແຕ່ງໄມ້ພາຍໃນປະເທດ.

ໃນການລິເລີ່ມແຜນງານ FLEGT VPA, ສປປ ລາວ ມີຈຸດປະສົງເພື່ອ:

- ປັບປຸງການຈັດຕັ້ງປະຕິບັດກົດໝາຍ, ຄວາມອາດສາມາດ ແລະ ລະບົບການຄຸ້ມຄອງປ່າໄມ້ ໃນຂະແໜງການປ່າໄມ້
- ສ້າງຄວາມຄືບໜ້າ ເພື່ອກ້າວໄປສູ່ ການປັບປຸງຊີວິດການເປັນຢູ່ ຂອງປະຊາຊົນ ໂດຍຜ່ານການຄຸ້ມຄອງປ່າໄມ້ທີ່ຍືນຍົງ
- ເຮັດໃຫ້ການຄ້າໄມ້ຂອງ ສປປ ລາວ ເຂົ້າເຖິງຕະຫຼາດ ໃນຂົງເຂດພາກພື້ນ ແລະ ຕະຫຼາດຂອງສະຫະພາບເອີຣົບ

ກະຊວງກະສິກຳ ແລະ ປ່າໄມ້ ເປັນອົງການຈັດຕັ້ງຫຼັກ ໃນການເຈລະຈາ ໂດຍມີການເຂົ້າຮ່ວມຂອງບັນດາຕົວແທນ ຈາກບັນດາກະຊວງ ແລະ ອົງການຈັດຕັ້ງຂອງລັດ, ພາກເອກະຊົນຂອງລາວ ແລະ ອົງການຈັດຕັ້ງທາງສັງຄົມ.

ປັດຈຸບັນ, ເນື້ອໃນຂອງ VPA ແມ່ນຢູ່ໃນຂະບວນການພິຈາລະນາ ໂດຍຜ່ານການປຶກສາຫາລື ລະຫວ່າງ ພາກສ່ວນທີ່ກ່ຽວຂ້ອງລະດັບຊາດ. ສປປ ລາວ ໄດ້ແຕ່ງຕັ້ງ ຄະນະຊີ້ນຳລະດັບຊາດ ເພື່ອບັນລຸຈຸດປະສົງ ໃນການຕັດສິນໃຈດັ່ງກ່າວ. ກຸ່ມຊ່ຽວຊານສະເພາະດ້ານ ຈາກພາກສ່ວນທີ່ກ່ຽວຂ້ອງ ແມ່ນສຸມໃສ່ບັນຫາສະເພາະ ໃນການສ້າງ TLDs. ດ້ວຍການລິເລີ່ມຮ່ວມກັນ ຂອງລັດຖະບານລາວ ແລະ ການຮ່ວມມືໃນການພັດທະນາຂອງ ເຢຍລະມັນ, GIZ ໄດ້ສະໜັບສະໜູນ ແຜນງານການເຈລະຈາ VPA ລະຫວ່າງ ສະຫະພາບເອີຣົບ ແລະ ສປປ ລາວ ນັບແຕ່ປີ 2013 ເປັນຕົ້ນມາ.



# ລະບົບຄໍ້າປະກັນໄມ້ທີ່ຖືກຕ້ອງຕາມກົດໝາຍ (TLAS) ຂອງ ສປປ ລາວ ແລະ ອົງປະກອບຫຼັກ ຂອງນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍ

ລະບົບຄໍ້າປະກັນໄມ້ທີ່ຖືກຕ້ອງຕາມກົດໝາຍ (TLAS) ໃນ ສປປ ລາວ ປະກອບມີ 5 ອົງປະກອບຫຼັກ 1) ກໍານົດ ສ່ວນປະກອບກ່ຽວກັບໄມ້ທີ່ຖືກຕ້ອງຕາມກົດໝາຍ, 2) ຈະຄວບຄຸມຕ່ອງໂສ້ການສະໜອງໄມ້ຄືແນວໃດ, 3) ຈະກວດກາຢັ້ງຢືນຄວາມຖືກຕ້ອງ ຂອງແຫຼ່ງທີ່ມາຂອງໄມ້ຄືແນວໃດ. 4) ຈະອອກໃບອະນຸຍາດແນວໃດ ແລະ 5) ກໍານົດ ກວດກາແບບອິດສະຫຼະ ເພື່ອຮັບປະກັນໃຫ້ ລະບົບດັ່ງກ່າວສາມາດງານໄດ້ດີ.

ເພື່ອຊ່ວຍ ຮັບປະກັນ ໃນການຄຸ້ມຄອງປ່າໄມ້ໃຫ້ໄດ້ດີນັ້ນ, ສປປ ລາວ ກໍານົດ 8 ນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍ (TLDs). 6 TLDs ແມ່ນກ່ຽວຂ້ອງກັບ ແຫຼ່ງທີ່ມາຂອງໄມ້: 1) ປ່າຜະລິດ, 2) ເຂດຫັນປ່ຽນທີ່ດິນປ່າໄມ້, 3) ປ່າປູກ, 4) ປ່າໄມ້ຊຸມໃຊ້ຂອງບ້ານ, 5) ໄມ້ຮິບ, ແລະ 6) ໄມ້ນໍາເຂົ້າຈາກຕ່າງປະເທດ. ນອກຈາກນັ້ນ, ຍັງມີ TLDs 2 ທີ່ກ່ຽວຂ້ອງກັບວຽກງານປີ່ນອ້ອມ, 7) ພັນທະແຮງງານໃນວຽກງານການຂຸດຄົ້ນໄມ້, ການປຸງແຕ່ງໄມ້ ແລະ ການຄ້າໄມ້, ແລະ 8) ການປຸງແຕ່ງໄມ້ ແລະ ການຄ້າໄມ້.

## ນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍ (TLDs) ໃນ ສປປ ລາວ

### TLDs ທີ່ຕິດພັນກັບແຫຼ່ງທີ່ມາຂອງໄມ້

- **TLD 1** — ປ່າຜະລິດ
- **TLD 2** — ເຂດຫັນປ່ຽນທີ່ດິນປ່າໄມ້
- **TLD 3** — ປ່າປູກ
- **TLD 4** — ປ່າໄມ້ຊຸມໃຊ້ຂອງບ້ານ
- **TLD 5** — ໄມ້ຮິບ
- **TLD 6** — ໄມ້ນໍາເຂົ້າຈາກຕ່າງປະເທດ

### TLDs ທີ່ມີລັກສະນະປີ່ນອ້ອມ

- **TLD 7** — ພັດທະນາແຮງງານໃນວຽກງານການຂຸດຄົ້ນໄມ້ ແລະ ການປຸງແຕ່ງໄມ້ ແລະ ການຄ້າ
- **TLD 8** — ການປຸງແຕ່ງໄມ້ ແລະ ການຄ້າໄມ້

● ການຄວບຄຸມຕ່ອງໂສ້ ການສະໜອງໄມ້ ສໍາລັບການໃຊ້ໄມ້ແບບຮີດຄອງປະເພນີ ແມ່ນຢູ່ໃນຂັ້ນຕອນການປັບປຸງ

● TLD ທີ່ມີການປັບປຸງ ແລະ ປຶກສາຫາລືທາງດ້ານເນື້ອໃນ



# ການຄວບຄຸມຕ່ອງໂສ້ການສະໜອງໄມ້ (ຕົວຢ່າງ: ປ່າຜະລິດ)



1 ການສຳຫຼວດກ່ອນການຂຸດຄົ້ນ/ການຄັດເລືອກຕົ້ນໄມ້ຢືນຕົ້ນ/ການວາງແຜນການຂຸດຄົ້ນ



2 ການຂຸດຄົ້ນ/ການລາກແກ່ ໄປຫາສະໜາມ 1 (ສໜ1)



3 ການຂົນສົ່ງ



4 ສະໜາມ 2 (ສໜ 2)



5 ການຂົນສົ່ງ



6 ສະໜາມ 3 (ສໜ 3)



7 ການປຸງແຕ່ງຂັ້ນໜຶ່ງ



8 ການເກັບມ້ຽນຜະລິດຕະພັນໄມ້ເຄິ່ງສຳເລັດຮູບ



9 ການປຸງແຕ່ງຂັ້ນສອງ



10 ການເກັບມ້ຽນຜະລິດຕະພັນໄມ້ສຳເລັດຮູບໃນສາງ



11 ການຈັດສົ່ງອອກຈາກໂຮງງານປຸງແຕ່ງໄມ້

# ການກວດກາຢັ້ງຢືນຄວາມຖືກຕ້ອງ ສຳລັບ ໄມ້ຈາກປ່າຜະລິດ ໃນ ສປປ ລາວ

ການຄວບຄຸມຕ່ອງໂສ້ການສະໜອງໄມ້ ແລະ ການຈັດຕັ້ງປະຕິບັດ ຂອງຜູ້ປະກອບການ ແລະ ຜະລິດຕະພັນໄມ້ ທີ່ຖືກຕ້ອງຕາມກົດໝາຍ ຈະຕ້ອງໄດ້ມີການກວດກາຢັ້ງຢືນຄວາມຖືກຕ້ອງ ໂດຍເຈົ້າໜ້າທີ່ກວດກາຢັ້ງຢືນຄວາມຖືກຕ້ອງ.

## ການກວດກາຢັ້ງຢືນຄວາມຖືກຕ້ອງ ໃນການຈັດຕັ້ງປະຕິບັດຕາມຂໍ້ກຳນົດຂອງ TLD



- ກວດກາ ຫຼັກການ ແລະ/ຫຼື ລະບຽບການ ໃນການຄວບຄຸມ ເຊັ່ນ: ຂັ້ນຕອນໃນການສ້າງຂໍ້ຕົກລົງໃນການຄຸ້ມຄອງປ່າໄມ້ບ້ານ ລະຫວ່າງ ໜ່ວຍງານຄຸ້ມຄອງ ແລະ ອົງການຈັດຕັ້ງປ່າໄມ້ບ້ານ
- ກວດກາ ເບິ່ງວ່າ ຕົວຢັ້ງຢືນ ມີຄວາມຊັດເຈັນ ແລະ ຖືກຕ້ອງ ແລ້ວບໍ

## ການກວດກາຢັ້ງຢືນຄວາມຖືກຕ້ອງ ຂອງການຄວບຄຸມຕ່ອງໂສ້ການສະໜອງໄມ້

**ການກວດກາ ຄວາມຖືກຕ້ອງ** ຂອງຂໍ້ມູນໄມ້ຂອງຜູ້ປະກອບການ (ກວດກາເບິ່ງວ່າ ຂໍ້ມູນໄມ້ ລວມທັງ ຊະນິດພັນໄມ້ ແລະ ຜະລິດຕະພັນໄມ້ຕົວຈິງ ໄດ້ສອດຄ່ອງກັນ ແລ້ວບໍ)




**ການກວດກາສົມທຽບ ຄວາມຖືກຕ້ອງຂອງຂໍ້ມູນໄມ້** ລະຫວ່າງ ບັນດາຈຸດຄວບຄຸມທີ່ສຳຄັນ ເຊິ່ງໄມ້ທີ່ບໍ່ຮູ້ຈັກແຫຼ່ງທີ່ມາ ອາດປົນເປເຂົ້າມາໃນຕ່ອງໂສ້ການສະໜອງໄມ້ (ກວດກາຄວາມສອດຄ່ອງ ຂອງຂໍ້ມູນໄມ້ລະຫວ່າງ ບັນດາຈຸດ ໃນຕ່ອງໂສ້ການສະໜອງໄມ້)



# FLEGT VPA ແລະ ຄຳສັ່ງ ເລກທີ 15/ນຍ

ໃນປີ 2016, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ໄດ້ອອກ ຄຳສັ່ງ ເລກທີ 15/ນຍ ວ່າດ້ວຍ "ການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ ແລະ ກວດກາ, ການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້" ທີ່ພະຍາຍາມ ສະກັດກັ້ນການຄ້າໄມ້ທ່ອນ ແລະ ໄມ້ເຄິ່ງສຳເລັດຮູບທີ່ຜິດກົດໝາຍ ໄປຍັງປະເທດເພື່ອນບ້ານ. ຄຳສັ່ງສະບັບນີ້ ມີເປົ້າໝາຍເພື່ອສ້າງຄວາມເຂັ້ມແຂງ ໃນການຈັດຕັ້ງປະຕິບັດ ການຄຸ້ມຄອງປ່າໄມ້ທີ່ຍືນຍົງ, ການປຸງແຕ່ງໄມ້ ແລະ ການຄ້າໄມ້ ເພື່ອຮັບປະກັນໃນການ ຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ຢ່າງເຄັ່ງຄັດຢູ່ໃນ ສປປ ລາວ.

ແຜນງານ FLEGT VPA ຂອງ ສປປ ລາວ ສະໜັບສະໜູນ ທິດທາງ ແລະ ການຈັດຕັ້ງປະຕິບັດ ຄຳສັ່ງ ເລກທີ 15/ນຍ ໃນຫຼາຍຮູບແບບ:

- ແຜນງານ FLEGT ເປັນສ່ວນໜຶ່ງ ໃນການໄດ້ສ້າງ ແຜນແມ່ບົດ ເພື່ອສ້າງຄວາມເຂັ້ມແຂງ ໃນອຸດສາຫະກຳການປຸງແຕ່ງໄມ້ ຂອງ ສປປ ລາວ ແລະ ກຳລັງສ້າງສູນຝຶກອົບຮົມ ເພື່ອສ້າງຄວາມອາດສາມາດ ໃຫ້ ບັນດາບໍລິສັດ ເພື່ອສ້າງມູນຄ່າເພີ່ມ ຂອງຜະລິດຕະພັນໄມ້. ສະນັ້ນ, ຈຶ່ງເປັນການສະໜັບສະໜູນ ຄຳສັ່ງຂອງນາຍົກລັດຖະມົນຕີ ເພື່ອດັດສົມຂະແໜງການປຸງແຕ່ງໄມ້ພາຍໃນປະເທດໃຫ້ທັນສະໄໝ.
- ໄດ້ສ້າງ ລະບົບການຕິດຕາມກວດກາ ໄມ້ສົ້ນເຂົ້າ ແລະ ສົ້ນອອກ ແຫ່ງຊາດ ແລະ ກຳລັງທົດລອງ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການຈັດຕັ້ງປະຕິບັດ ໃນລະດັບບໍລິສັດ. ສະນັ້ນ, ຈຶ່ງເປັນການ ປະກອບສ່ວນເຮັດໃຫ້ ຂະແໜງການປຸງແຕ່ງໄມ້ ທັນສະໄໝ.
- ກຳລັງປັບປຸງ ລະບຽບການ ເລກທີ 0112/ກປ 2008 ວ່າດ້ວຍ ການຂຸດຄົ້ນໄມ້ ແລະ ການປະເມີນຫຼັງການຂຸດຄົ້ນໄມ້ ໃນອ່າງເກັບນ້ຳ ຂອງໂຄງການໄຟຟ້ານ້ຳຕົກ ເພື່ອຜັນຂະຫຍາຍ ໄປຍັງທຸກໂຄງການ ທີ່ມີການຫັນປ່ຽນທີ່ດິນປ່າໄມ້ ແລະ ກຳລັງປັບປຸງ ບົດແນະນຳ ເລກທີ 962 /ກປມ 2010 ວ່າດ້ວຍ ການເຄື່ອນຍ້າຍໄມ້ ສຳລັບປ່າຜະລິດ ໄດ້ຜັນຂະຫຍາຍ ໄປຍັງ ເຂດຫັນປ່ຽນທີ່ດິນປ່າໄມ້ ແລະ ກຳລັງທົດລອງ ໃນແຂວງທົດລອງ ເພື່ອປັບປຸງ ໃນການປັກຫຼັກໝາຍເຂດຂຸດຄົ້ນໄມ້, ການສຳຫຼວດ ກ່ອນການຂຸດຄົ້ນ ແລະ ການຕິດຕາມກວດກາ ໃນການດຳເນີນການຂຸດຄົ້ນ.



# ຜົນປະໂຫຍດ ທີ່ ສປປ ລາວ ຈະໄດ້ຮັບຈາກ ວຽກງານ FLEGT

ການເຂົ້າຮ່ວມ ແຜນງານ FLEGT VPA ຂອງ ສປປ ລາວ ສາມາດໄດ້ຮັບຜົນປະໂຫຍດ ທາງດ້ານ ການເມືອງ, ເສດຖະກິດ, ສິ່ງແວດລ້ອມ ແລະ ສັງຄົມ:

- **ຜົນປະໂຫຍດທາງດ້ານການເມືອງ:** ຄວາມມຸ່ງໝັ້ນ ຂອງ ສປປ ລາວ ຕໍ່ ແຜນງານ FLEGT VPA ເປັນໂອກາດທີ່ດີເລີດ ເພື່ອປັບປຸງການຄຸ້ມຄອງປ່າໄມ້ ຢູ່ພາຍໃນປະເທດ ແລະ ຍັງເປັນການເຊື່ອມໂຍງ ກັບ ບັນດາປະເທດອື່ນໃນຂົງເຂດພາກພື້ນ ແລະ ໃນໂລກ.
- **ຜົນປະໂຫຍດທາງດ້ານເສດຖະກິດ:** ການເຂົ້າຮ່ວມ FLEGT VPA ສ້າງເງື່ອນໄຂທີ່ດີ ຕໍ່ການຜັນຂະຫຍາຍອຸດສາຫະກຳປຸງແຕ່ງໄມ້ ໂດຍມີການເພີ່ມຄວາມສາມາດໃນການເຂົ້າເຖິງ ຕະຫຼາດສະຫະພາບເອີຣົບ ແລະ ຕະຫຼາດສົ່ງອອກອື່ນໆ. ພ້ອມກັນນີ້, ການເຂົ້າຮ່ວມ FLEGT VPA ກໍ່ເປັນການສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ ໃນອຸດສາຫະກຳປຸງແຕ່ງໄມ້ໃນ ສປປ ລາວ.
- **ຜົນປະໂຫຍດທາງດ້ານສິ່ງແວດລ້ອມ:** ການເຂົ້າຮ່ວມ FLEGT VPA ສະໜັບສະໜູນ ການຈັດຕັ້ງປະຕິບັດ ຍຸດທະສາດປ່າໄມ້ ຮອດປີ 2020 ຂອງ ສປປ ລາວ ເພື່ອຂະຫຍາຍອັດຕາການປົກຫຸ້ມຂອງປ່າ ໃຫ້ຮອດ 70%. ການສະກັດກັ້ນການຂຸດຄົ້ນໄມ້ທີ່ຜິດກົດໝາຍ, ການທຳລາຍປ່າໄມ້ ແລະ ຄວາມເສື່ອມໂຊມຂອງປ່າໄມ້ ຈະສາມາດຫຼຸດຜ່ອນໄດ້ ລວມທັງການປ່ອຍທາດອາຍພິດເຮືອນແກ້ວ ໃຫ້ຫນ້ອຍລົງ. ສິ່ງເຫຼົ່ານີ້ ຈະຊ່ວຍຫຼຸດຜ່ອນຜົນກະທົບທາງລົບ ຕໍ່ການປ່ຽນແປງດິນຟ້າອາກາດ.
- **ຜົນປະໂຫຍດທາງດ້ານສັງຄົມ:** ຄຽງຄູ່ກັບຜົນປະໂຫຍດ ທີ່ໄດ້ກ່າວມາຂ້າງເທິງນັ້ນ, ຄວາມມຸ່ງໝັ້ນ ຂອງ ສປປ ລາວ ຕໍ່ FLEGT VPA ຈະສ້າງໂອກາດ ເພື່ອປັບປຸງຄວາມອາດສາມາດ ແລະ ທັກສະໃຫ້ແກ່ຜູ້ອອກແຮງງານຂອງ ສປປ ລາວ. ພ້ອມກັນນີ້, ການຫຼຸດຜ່ອນຂອງຜົນກະທົບທາງລົບ ຈາກການຂຸດຄົ້ນໄມ້ທີ່ຜິດກົດໝາຍ ຈະກ້າວໄປສູ່ການປັບປຸງຊີວິດການເປັນຢູ່ ໂດຍສະເພາະແມ່ນ ໃຫ້ປະຊາຊົນໃນຊົນນະບົດ ເຊິ່ງອາໄສປ່າໄມ້ ແລະ ຜະລິດຕະພົນຂອງປ່າໄມ້ເປັນຕົ້ນຕໍ.



ການ ຮ່ວມມື ເຢຍລະມັນ
DEUTSCHE ZUSAMMENARBEIT

Supported by giz

## ຕິດຕໍ່ສອບຖາມ ແລະ ສິ່ງຂ່າວສານໄດ້ທີ່:


ພະແນກນິຕິກຳ ແລະ ນະໂຍບາຍກວດກາປ່າໄມ້

(ຫ້ອງການປະສານງານ FLEGT)

ກົມກວດກາປ່າໄມ້

ທາດດຳ, ເມືອງ ຈັນທະບູລີ, ນະຄອນຫລວງວຽງຈັນ, ສປປ ລາວ

ໂທລະສັບ: **+856 21-255 264**

ໂທລະສານ: **+856 21-255 263**

ອີເມລ: info@flegtlaos.com

www.FLEGTlaos.com



ຮູບພາບໂດຍ: GIZ /Bart Verweij
GIZ /Bounmee Maokhamphiou


